ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ກົມຄຸ້ມຄອງບໍ່ແຮ່

0011----

ເລກທີ............../ກຄຣ3

ນະຄອນຫຼວງວຽງຈັນ, ວັນທີ04ມັງກອນ 2019

# ແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ປະຈຳແຂວງ ແລະ ນະຄອນຫຼວງ.

ເລື່ອງ: ຂັ້ນຕອນການສະເໜີແຜນການຈຳໜ່າຍ ແລະ ການຈຳໜ່າຍຜະລິດຕະພັນແຮ່ທາດ.

- ອີງຕາມກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 03/11/2017.
- ອີງຕາມຄຳສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01/02/2018.

ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ ຂໍແຈ້ງມາຍັງທ່ານ ຊາບວ່າ: ເພື່ອຜັນຂະຫຍາຍຄຳສັ່ງ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບ ເລກທີ 02/ນຍ, ລົງວັນທີ 01/02/2018 ໂດຍສະເພາະການອຳນວຍຄວາມສະດວກໃຫ້ແກ່ວຽກງານຈຳໜ່າຍ ຜະລິດຕະພັນແຮ່ທາດຢູ່ພາຍໃນ ແລະ ສົ່ງອອກຕ່າງປະເທດ ໃຫ້ໄດ້ຮັບປະສິດທິຜົນສູງ, ຈຶ່ງໄດ້ກຳນົດຂັ້ນຕອນ ການສະເໜີ ແລະ ການພິຈາລະນາແຜນການຈຳໜ່າຍຜະລິດຕະພັນແຮ່ທາດປະຈຳປີ ແລະ ການຈຳໜ່າຍແຕ່ລະຄັ້ງ ດັ່ງນີ້:

**I. ການສະເໜີ ແລະ ການພິຈາລະນາແຜນການຈຳໜ່າຍ.**

**1. ການສະເໜີ.**

ບໍລິສັດ ຫຼື ຫົວໜ່ວຍທຸລະກິດ ທີ່ສາມາດສະເໜີແຜນຈຳໜ່າຍຜະລິດຕະພັນແຮ່ທາດ ຕ້ອງແມ່ນຜູ້ທີ່ໄດ້ ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບບໍ່ແຮ່ຖືກຕ້ອງຕາມລະບຽບກົດໝາຍ ແລະ ປະຕິບັດພັນທະທາງດ້ານການ ເງິນຕາມສັນຍາສຳປະທານ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງຄົບຖ້ວນ, ຊຶ່ງຕ້ອງໄດ້ປະກອບເອກະສານ ດັ່ງນີ້:

1) ໜັງສືສະເໜີ (ຕາມແບບຟອມ);
2) ແຜນການຈຳໜ່າຍ (ຕາມແບບຟອມ);
3) ບົດສະຫຼຸບການປະຕິບັດວຽກງານໃນໄລຍະຜ່ານມາ ເປັນຕົ້ນ: ການຜະລິດ, ຈຳໜ່າຍ, ມູນຄ່າຈຳໜ່າຍ, ການ ປະຕິບັດພັນທະທາງດ້ານການເງິນຕໍ່ລັດຖະບານ (ພ້ອມເອກະສານຢັ້ງຢືນ) ແລະ ຂໍ້ສະດວກ-ຫຍຸ້ງຍາກ (ຕາມ ແບບຟອມ).

2. ການພິຈາລະນາອະນຸມັດ.

1) ບໍລິສັດ ຫຼື ຫົວໜ່ວຍທຸລະກິດ ປະກອບເອກະສານຄົບຖ້ວນຕາມ I ຂໍ້ 1, ກົມຄຸ້ມຄອງບໍ່ແຮ່/ພະແນກພະລັງງານ ແລະ ບໍ່ແຮ່ ປະຈຳແຂວງ/ນະຄອນຫຼວງ ຈະພິຈາລະນາເຊັນອະນຸມັດແຜນດັ່ງກ່າວພາຍໃນ 1 ວັນລັດຖະການ.

2) ການຈໍລະຈອນເອກະສານ: ຍື່ນເອກະສານຫາຂາເຂົ້າ → ຄະນະກົມ/ຄະນະພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງ/ນະຄອນຫຼວງ→ ພະແນກ/ຫ້ອງການ ກ່ຽວຂ້ອງ → ຄະນະກົມ/ຄະນະພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງ/ນະຄອນຫຼວງ ເຊັນອະນຸມັດ → ຂາອອກ.

II. ການສະເໜີ ແລະ ການພິຈາລະນາການຈໍາໜ່າຍແຕ່ລະຄັ້ງ.

1. ເອກະສານທີ່ບໍລິສັດ ຫຼື ຫົວໜ່ວຍທຸລະກິດ ຕ້ອງໄດ້ປະກອບ:

1) ໜັງສືສະເໜີ (ຕາມແບບຟອມ);

2) ເອກະສານຢັ້ງຢືນການປະຕິບັດພັນທະທາງດ້ານການເງິນຄັ້ງຈໍາໜ່າຍຜ່ານມາ ເຊັ່ນ: ຄ່າຊົບພະຍາກອນແຮ່ທາດ, ພາສີ, ອາກອນ ແລະ ຄ່າທໍານຽມອື່ນໆ (ກໍລະນີເຄີຍຈໍາໜ່າຍຜ່ານມາ);

3) ສັນຍາຊື້-ຂາຍກັບລູກຄ້າ ແລະ ຜົນວິໄຈແຮ່ທາດ.

2. ການພິຈາລະນາອະນຸມັດ.

1) ເມື່ອບໍລິສັດ ຫຼື ຫົວໜ່ວຍທຸລະກິດ ປະກອບເອກະສານຄົບຖ້ວນຕາມ II ຂໍ້ 1, ກົມຄຸ້ມຄອງບໍ່ແຮ່/ພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງ/ນະຄອນຫຼວງ ຈະພິຈາລະນາເຊັນອະນຸມັດການສະເໜີດັ່ງກ່າວພາຍໃນ 1 ວັນລັດຖະການ.

2) ການຈໍລະຈອນເອກະສານ: ຍື່ນເອກະສານຫາຂາເຂົ້າ → ພະແນກ/ຫ້ອງການ ກ່ຽວຂ້ອງ → ຄະນະກົມ/ຄະນະພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງ/ນະຄອນຫຼວງ ເຊັນອະນຸມັດ → ຂາອອກ.

III. ການອະນຸຍາດນໍາເຂົ້າ-ສົ່ງອອກຜະລິດຕະພັນແຮ່ທາດ, ການຕິດຕາມກວດກາ ແລະ ການລາຍງານ.

1. ການອະນຸຍາດນໍາເຂົ້າ-ສົ່ງອອກຜະລິດຕະພັນແຮ່ທາດ.

ການນໍາເຂົ້າ ແລະ ສົ່ງອອກຜະລິດຕະພັນແຮ່ທາດ ຕ້ອງໄດ້ຮັບອະນຸຍາດຈາກກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່. ສໍາລັບພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງ/ນະຄອນຫຼວງ ມີສິດອະນຸຍາດໃຫ້ບໍລິສັດ ຫຼື ຫົວໜ່ວຍທຸລະກິດຈໍາໜ່າຍຜະລິດຕະພັນແຮ່ທາດທີ່ຂັ້ນແຂວງ/ນະຄອນຫຼວງອອກອະນຸຍາດ ເພື່ອຈໍາໜ່າຍຢູ່ພາຍໃນປະເທດ.

2. ການຕິດຕາມກວດກາ.

ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ ແລະ ຂະແໜງການກ່ຽວຂ້ອງຂອງແຂວງ ເປັນຜູ້ຕິດຕາມກວດກາປະລິມານຜະລິດຕະພັນແຮ່ທາດທີ່ບໍລິສັດສະເໜີເຄື່ອນຍ້າຍ ຫຼື ຈໍາໜ່າຍ (ລວມທັງໄລຍະການຂົນສົ່ງຜ່ານດ່ານອອກອະນຸຍາດ) ດ້ວຍການຕິດຊັ່ງນໍ້າໜັກ ແລະ ນໍາໃຊ້ໃບຢັ້ງຢືນການເຄື່ອນຍ້າຍແຮ່ທາດ. ການຈັດຕັ້ງປະຕິບັດ ຕ້ອງໃຫ້ມີຄວາມວ່ອງໄວ, ກະທັດຮັດ, ມີຄວາມເປັນເອກະພາບ ແລະ ຮັບປະກັນຄວາມຖືກຕ້ອງ ໂດຍສອດຄ່ອງຕາມລະບຽບການ.

3. ການລາຍງານ.

ພາຍຫຼັງສໍາເລັດການຕິດຕາມກວດກາການເຄື່ອນຍ້າຍ ຫຼື ຈໍາໜ່າຍ, ພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງ/ນະຄອນຫຼວງ ຕ້ອງລາຍງານກົມຄຸ້ມຄອງບໍ່ແຮ່ເພື່ອຮັບຊາບໃນແຕ່ລະຄັ້ງ; ຖ້າມີເຫດການບໍ່ປົກກະຕິຕ້ອງຮີບຮ້ອນລາຍງານຫາກົມຄຸ້ມຄອງບໍ່ແຮ່ ແລະ ການນໍາແຂວງຮັບຊາບໂດຍດ່ວນ.

IV. ອາຍຸຂອງແຜນການຈໍາໜ່າຍ ແລະ ໜັງສືອະນຸຍາດຈໍາໜ່າຍຜະລິດຕະພັນແຮ່ທາດ.

1. ອາຍຸແຜນການຈໍາໜ່າຍ: ບໍ່ເກີນ 1 ປີ ໂດຍຖືເອົາຕາມປີປະຕິທິນ ຫຼື ບໍ່ເກີນວັນທີ 31 ເດືອນ 12 ຂອງແຕ່ລະປີ.

2. ອາຍຸໜັງສືອະນຸຍາດຈຳໜ່າຍຜະລິດຕະພັນແຮ່ທາດ: ພາຍຫຼັງໜັງສືອະນຸຍາດຈຳໜ່າຍຜະລິດຕະພັນແຮ່ທາດຖືກເຊັນອະນຸມັດ ບໍລິສັດຕ້ອງຊຳລະຄ່າຊົບພະຍາກອນແຮ່ທາດພາຍໃນ 7 ວັນລັດຖະການ. ສຳລັບອາຍຸໜັງສືອະນຸຍາດຈຳໜ່າຍຜະລິດຕະພັນແຮ່ທາດ ກຳນົດດັ່ງນີ້:

- ກໍລະນີ ໜັງສືອະນຸຍາດຈຳໜ່າຍຜະລິດຕະພັນແຮ່ທາດເຊັນອະນຸມັດ ໃນເດືອນ 1-8 ໜັງສືອະນຸຍາດດັ່ງກ່າວ ແມ່ນສາມາດນຳໃຊ້ໄດ້ 6 ເດືອນ.
- ກໍລະນີ ໜັງສືອະນຸຍາດຈຳໜ່າຍຜະລິດຕະພັນແຮ່ທາດເຊັນອະນຸມັດ ໃນເດືອນ 9-12 ໜັງສືອະນຸຍາດດັ່ງກ່າວ ແມ່ນສາມາດນຳໃຊ້ໄດ້ບໍ່ເກີນເດືອນ 2 ຂອງປີຖັດໄປ.
- ການຕໍ່ອາຍຸໜັງສືອະນຸຍາດຈຳໜ່າຍຜະລິດຕະແຮ່ທາດ: ກໍລະນີ ບໍລິສັດ ຫຼື ຫົວໜ່ວຍທຸລະກິດ ບໍ່ຈຳໜ່າຍໄດ້ສຳເລັດ ຈຶ່ງສະເໜີຕໍ່ອາຍຸໜັງສືດັ່ງກ່າວຕື່ມອີກ (ກ່ອນໜັງສືດັ່ງກ່າວຈະໝົດອາຍຸພາຍໃນ 7 ວັນລັດຖະກການ), ແຕ່ສາມາດຕໍ່ໄດ້ເທື່ອລະບໍ່ເກີນ 2 ເດືອນ ຕາມການພິຈາລະນາຂອງຂະແໜງພະລັງງານ ແລະ ບໍ່ແຮ່. ຖ້າບໍລິສັດ ຫຼື ຫົວໜ່ວຍທຸລະກິດ ຍັງບໍ່ໄດ້ດຳເນີນການເຄື່ອນຍ້າຍ ຫຼື ຈຳໜ່າຍຜະລິດຕະພັນແຮ່ທາດ, ຂະແໜງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາ, ໄລ່ລຽງລາຄາທີ່ໄດ້ກຳນົດໃນການຄິດໄລ່ຄ່າຊົບພະຍາກອນແຮ່ທາດ ແລະ ອາກອນອື່ນໆທີ່ຕິດພັນນັ້ນຄືນໃໝ່; ແຕ່ຖ້າໄດ້ດຳເນີນການໄປແລ້ວ ແຕ່ຍັງບໍ່ສຳເລັດ ແມ່ນຖືເອົາຕາມໜັງສືອະນຸຍາດຈຳໜ່າຍຄັ້ງດັ່ງກ່າວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການນີ້ດ້ວຍ.

ຮັກສາການຫົວໜ້າກົມ

ຄຳຕັນ ວົງພັນສີປະເສີດ

<u>ໝາຍເຫດ</u>:

- ແຈ້ງການສະບັບນີ້ປ່ຽນແທນ ແຈ້ງການເລກທີ 2050/ກບຣ, ລົງວັນທີ 24/10/2013.
- ສຳເນົາ-ສົ່ງ: ບັນດາໂຄງການລົງທຶນດ້ານບໍ່ແຮ່ໃນຂອບເຂດທົ່ວປະເທດ.
- ເອກະສານຄັດຕິດປະກອບມີ:
  - ຮ່າງແບບຟອມໜັງສືສະເໜີ;
  - ຮ່າງແບບຟອມແຜນການຈຳໜ່າຍ ແລະ ຕາຕະລາງປະກອບຂໍ້ມູນ;
  - ຕາຕະລາງຕິດຕາມການຈຳໜ່າຍແຕ່ລະຄັ້ງ.